# ທະນາຄານແຫ່ງ ສປປ ລາວ ຈັດຕັ້ງການອອກແຮງງານເພື່ອຕ້ອນຮັບວັນຊາດ





ໃນຕອນເຊົ້າຂອງວັນເສົາ ວັນທີ 26 ພະຈິກ ຜ່ານມາ ອົງການຈັດຕັ້ງຊາວໜຸ່ມ-ແມ່ຍິງ ແລະ ກຳມະບານ ຂອງທະນາຄານແຫ່ງ ສປປ ລາວ ໄດ້ສາມັກຄີກັນອອກແຮງງານເພື່ອເປັນການສ້າງຂະບວນການເພື່ອຂໍ່ານັບຮັບຕ້ອນວັນຊາດທີ 2 ທັນວາ ຄົບຮອບ 36 ປີ ດ້ວຍບັນຍາກາດອັນຟົດຟື້ນ.

ໃນການອອກແຮງງານໃນຄັ້ງນີ້ກໍມີອົງການຈັດຕັ້ງມະຫາຊົນຂອງສໍານັກງານໃຫຍ່ທະນາຄານແຫ່ງ ສປປ ລາວ, ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ, ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້, ກອງທຶນປົກປ້ອງຜູ້ຝາກເງິນ, ໂຮງພິມທະນາຄານ ແລະ ໂຮງຮຽນອະນຸບານ ເຊິ່ງມີຄົນເຂົ້າຮ່ວມຫຼາຍກວ່າ 500 ຄົນ ການອອກແຮງງານໃນຄັ້ງນີ້ປະກອບມີໜ້າວຽກປັດກວາດອະນາໄມຂີ້ເຫຍື້ອ, ຈົກດິນ ແລະ ຂີ້ເຫຍື້ອຢູ່ຮ່ອງນໍ້າເປື້ອນ, ຖາງຫຍ້າ, ອະນາໄມສໍານັກງານ-ຫ້ອງການໃນຂອບເຂດຮັບຜິດຊອບຂອງແຕ່ລະພາກສ່ວນ.

ສະຫາຍ ດຣ ອາຄົມ ປູະເສີດ ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະຊາວໜຸ່ມທະນາຄານແຫ່ງ ສປປ ລາວ ໄດ້ໃຫ້ສໍາພາດວ່າ: ອົງການຈັດຕັ້ງມະຫາຊົນພວກເຮົາເວົ້າລວມ ເວົ້າສະເພາະຖັນແຖວຊາວໜຸ່ມທະນາຄານແຫ່ງ ສປປ ລາວ ສຸດທີ່ເອກອ້າງທະນົງໃຈ ແລະ ເບີກບານມ່ວນຊື່ນທີ່ໄດ້ພ້ອມກັນອອກແຮງງານເພື່ອເປັນຂອງຂວັນໃຫ້ແກ່ວັນປະຫວັດສາດ ວັນຊາດຄົບຮອບ 36 ປີ ເຊິ່ງວັນດັ່ງກ່າວລ້ວນແຕ່ມີຄວາມໝາຍສໍາຄັນທີ່ສຸດຂອງຊາດລາວ ແລະ ຄົນລາວພວກເຮົາ, ຍ້ອນມີວັນນັ້ນພວກເຮົາຈຶ່ງມີປະຈຸບັນ ແລະ ກໍມີອະນາຄົດທີ່ແຈ່ມໃສ ແລະ ໃນໂອກາດນີ້ຂໍອວຍພອນໄຊອັນປະເສີດມາຍັງ ບັນດາທ່ານຜູ້ນໍາພັກ-ລັດ, ຄະນະພັກ-ຄະນະຜູ້ວ່າການກໍຄືການນໍາຂອງອົງການຊາວໜຸ່ມ ຈົ່ງມີແຕ່ຄວາມຜາສຸກສົມຫວັງຕະຫຼອດການລະນານ.